ບໍລິສັດ ລາວອາໂກຣເທັກ ມະຫາຊົນ

pwc

ເອກະສານລາຍງານການເງິນ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2018

www.pwc.com/la

ສາລະບານ	ໜ້າ
ບົດລາຍງານ ຂອງຜູ້ກວດສອບອິດສະຫຼະ	1 – 5
ໃບລາຍງານສະຖານະການເງິນ	6
ໃບລາຍງານຜົນໄດ້ຮັບ	7
ໃບລາຍງານສ່ວນປ່ຽນແປງທຶນຕົນເອງຂອງຜູ້ຖືຮຸ້ນ	8
ໃບລາຍງານກະແສເງິນສົດ	9
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ	10 - 25

pwc

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ບໍລິຫານຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ຄວາມເຫັນ

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນ ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ບໍລິສັດ) ໄດ້ຖືກສ້າງຂຶ້ນຢ່າງຖືກຕ້ອງ ແລະ ສອດຄ່ອງກັບນະໂຍບາຍການບັນຊີ ຊຶ່ງອະທິບາຍໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານການເງິນສະບັບນີ້.

ການກວດສອບຂອງພວກເຮົາມີດັ່ງນີ້:

ເອກະສານລາຍງານການເງິນຂອງບໍລິສັດປະກອບດ້ວຍ:

- ໃບລາຍງານຖານະການເງິນສິ້ນສຸດ ວັນທີ 31 ທັນວາ 2018
- ໃບລາຍງານຜົນໄດ້ຮັບສຳລັບທ້າຍປີສິ້ນສຸດວັນທີດຽວກັນ
- ໃບລາຍງານສ່ວນປ່ຽນແປງທຶນຕົນເອງສຳລັບທ້າຍປີສິ້ນສຸດວັນທີດຽວກັນ
- ໃບລາຍງານກະແສເງິນສົດສຳລັບທ້າຍປີສິ້ນສຸດວັນທີດຽວກັນ ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ສັງລວມນະໂຍບາຍການບັນຊີທີ່ສຳຄັນ

ພື້ນຖານໃນການອອກຄວາມເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs). ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ມາດຕະຖານໄດ້ລະບຸໄວ້ໃນໜ້າທີ່ຮັບຜິດຊອບຂອງຜູ້ກວດສອບພາຍນອກ ສຳລັບການກວດສອບ ເອກະສານລາຍງານການເງິນ ຂອງບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫລັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການອອກຄວາມເຫັນຂອງພວກເຮົາ.

ຄວາມເປັນອິດສະຫລະ

ພວກເຮົາມີຄວາມເປັນອິດສະຫລະ ຈາກບໍລິສັດ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບອາຊີບນັກບັນຊີໃນສ່ວນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນທີ່ກຳນົດໂດຍຄະນະກຳມະການຈັນຍາບັນນານາຊາດ ສຳລັບນັກບັນຊີ (IESBA Code) ແລະ ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ. ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

ຂໍ້ມູນ ແລະ ເຫດການທີ່ເນັ້ນ - ພື້ນຖານ ການບັນຊີ

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍເຖິງພື້ນຖານການກະກຽມເອກະສານລາຍງານການເງິນ. ພື້ນຖານການບັນຊີທີ່ຖືກນຳໃຊ້ໃນການກະກຽມບົດລາຍງານການເງິນສະບັບນີ້ ອາດມີຄວາມແຕກຕ່າງກັບມາດຕະຖານລາຍງານການເງິນສາກົນ. ດັ່ງນັ້ນ ຜູ້ທີ່ນຳໃຊ້ ຄວນມີຄວາມເຂົ້າໃຈວ່າເອກະສານລາຍງານການເງິນສະບັບນີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດສອດຄ່ອງຕາມມາດຕະຖານລາຍງານການເງິນສາກົນ. ທັ້ງນີ້ຄວາມເຫັນ ຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິງນັ້ນ.

ເລື່ອງສຳຄັນໃນການກວດສອບ

ເລື່ອງສຳຄັນໃນການກວດສອບ ຄື ເລື່ອງຕ່າງໆ ທີ່ມີຄວາມສຳຄັນທີ່ສຸດຕາມການປະເມີນໂດຍຄວາມຮູ້ຄວາມສາມາດຂອງພວກເຮົາໃນການກວດສອບເອກະສານລາຍງານການເງິນສຳລັບປີປັດຈຸບັນ. ພວກເຮົາໄດ້ນຳເນື້ອໃນສຳຄັນເຫຼົ່ານີ້ມາລວມໃນການກວດສອບເອກະສານລາຍງານການເງິນເພື່ອສະແດງຄວາມເຫັນຂອງພວກເຮົາ ພ້ອມນີ້ພວກເຮົາບໍ່ໄດ້ສະແດງຄວາມເຫັນແຍກຕ່າງຫາກສຳລັບເລື່ອງເຫຼົ່ານີ້.

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບ
ອີງຕາມບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນຂໍ້ 2.9 ນະໂຍບາຍການບັນຊີການຮັບຮູ້ລາຍຮັບ ແລະ ອີງຕາມບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນຂໍ້ 15 ລາຍຮັບຈາກການຂາຍ ແລະ ການບໍລິການ. ລາຍຮັບຈາກການຂາຍສິນຄ້າ ແມ່ນຮັບຮູ້ ເມື່ອສິນຄ້າໄດ້ຖືກສົ່ງມອບໃຫ້ກັບຜູ້ຊື້. ເຖິງຢ່າງໃດກໍ່ຕາມ, ການຂາຍສິນຄ້າສ່ວນໃຫຍ່ໃນປີແມ່ນຮັບຮູ້ເປັນລາຍຮັບຕາມວັນທີ ທີ່ລູກຄ້າໄດ້ເຊັນໃນໃບສົ່ງເຄື່ອງ ເຊິ່ງຈະນຳໄປສູ່ການພິຈາລະນາຄວາມຄົບຖ້ວນ ແລະ ການບັນທຶກຕາມໄລຍະການຮັບຮູ້ລາຍຮັບ. ພວກເຮົາໄດ້ສຸມໃສ່ການຮັບຮູ້ລາຍຮັບນີ້ທີ່ເປັນການຂາຍສິນຄ້າໃຫ້ລູກຄ້າຕ່າງແຂວງທີ່ມີໄລຍະເວລາໃນການສົ່ງ 3 ຫາ 5 ມື້. ດັ່ງນັ້ນ ມີຄວາມເປັນໄປໄດ້ກ່ຽວກັບຄວາມສ່ຽງທີ່ເອກະສານລາຍງານການເງິນຈະຜິດພາດກ່ຽວກັບລາຍການທີ່ເກີດຂຶ້ນທ້າຍປີ. ນອກຈາກນີ້, ມູນຄ່າ ແລະ ລາຍການເຄື່ອນໄຫວຂອງລາຍຮັບແມ່ນມີມູນຄ່າສູງທີ່ເປັນສາລະສຳຄັນໃນສິ້ນສຸດປີການບັນຊີ.	ພວກເຮົາປະຕິບັດຕາມຂັ້ນຕອນດັ່ງຕໍ່ໄປນີ້: • ປະເມີນ ແລະ ທົດສອບ ປະສິດທິພາບໃນການອອກແບບ ແລະ ການດຳເນີນງານຂອງການຮັບຮູ້ລາຍຮັບ ໂດຍສຸມໃສ່ການຄວບຄຸມເລື່ອງເວລາ ແລະ ຄວາມຄົບຖ້ວນຂອງການຂາຍ • ທົດສອບການສົມທຽບຈາກການຄວບຄຸມໃນການເບີກສິນຄ້າອອກສາງ ກັບ ບັນຊີໃຫຍ່ແຍກປະເພດຂອງເລກບັນຊີລາຍຮັບລວມທັງການກວດສອບລາຍການປັບປຸງ ທຽບໃສ່ກັບເອກະສານທີ່ກ່ຽວຂ້ອງ • ເລືອກລາຍການລາຍຮັບຫຼັງປີການບັນຊີມາທົດສອບວ່າ ບັນທຶກເໝາະສົມກັບເງື່ອນໄຂທີ່ຢູ່ໃນໃບແຈ້ງໜີ້ ຫຼື ບໍ່ • ທົດສອບລາຍການເຄື່ອນໄຫວຂອງລາຍຮັບສຳລັບສິນຄ້າທີ່ຖືກຂາຍໃນລະຫວ່າງປີການບັນຊີໂດຍມີການສົມທຽບລາຍການເຄື່ອນໄຫວຂອງລາຍຮັບກັບໃບສົ່ງສິນຄ້າທີ່ມີລາຍເຊັນລູກຄ້າ. • ໄດ້ມີການສອບຖາມຜູ້ບໍລິຫານກ່ຽວກັບຄວາມຄົບຖ້ວນ ແລະ ບັນທຶກບັນຊີໃຫ້ຖືກຕ້ອງສຳລັບການຮັບຮູ້ລາຍຮັບ. ຈາກວິທີການກວດສອບ, ພວກເຮົາພົບວ່າການຮັບຮູ້ລາຍຮັບແມ່ນເປັນໄປຕາມນະໂຍບາຍການບັນຊີ ແລະ ຫຼັກຖານທີ່ກວດສອບ

ຂໍ້ມູນອື່ນ

ຜູ້ບໍລິຫານມີໜ້າທີ່ຮັບຜິດຊອບຕໍ່ຂໍ້ມູນອື່ນເຊິ່ງປະກອບມີ ຂໍ້ມູນລວມຢູ່ໃນບົດລາຍງານປະຈຳປີແຕ່ບໍ່ລວມເຖິງເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບທີ່ຢູ່ໃນເອກະສານລາຍງານນັ້ນ. ພວກເຮົາຄາດວ່າຈະໄດ້ຮັບລາຍງານປະຈຳປີຫຼັງຈາກວັນທີໃນບົດລາຍງານຂອງຜູ້ກວດສອບບັນຊີ.

ຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນບໍ່ຄອບຄຸມເຖິງຂໍ້ມູນອື່ນ ແລະ ບໍ່ໃຫ້ຄວາມເຊື່ອໝັ້ນຕໍ່ຂໍ້ມູນນັ້ນ.

ໃນຖານະທີ່ເປັນສ່ວນໜຶ່ງໃນການກວດສອບຂອງພວກເຮົາ ຄວາມຮັບຜິດຊອບຂອງພວກເຮົາທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນ ຄືການອ່ານ ແລະ ພິຈາລະນາວ່າຂໍ້ມູນອື່ນມີຄວາມຂັດແຍ່ງທີ່ເປັນສາລະສຳຄັນກັບເອກະສານລາຍງານການເງິນ ຫຼື ກັບຄວາມຮູ້ທີ່ໄດ້ຮັບຈາກການກວດສອບຂອງພວກເຮົາ ຫຼື ເຫັນວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນ ຫຼື ບໍ່.

ຫາກພວກເຮົາພົບວ່າມີການສະແດງຂໍ້ມູນທີ່ຜິດຕໍ່ຄວາມເປັນຈິງໃນບົດລາຍງານປະຈຳປີ ແລະ ພວກເຮົາສະຫຼຸບວ່າມີຂໍ້ຜິດພາດທີ່ເປັນສາລະສຳຄັນຂອງຂໍ້ມູນອື່ນນີ້, ພວກເຮົາຕ້ອງໄດ້ລາຍງານຕາມຄວາມເປັນຈິງໃຫ້ກັບຄະນະກຳມະການກວດສອບ.

ຄວາມຮັບຜິດຊອບຂອງຜູ້ບໍລິຫານ ແລະ ຄະນະກຳມະການກວດສອບ ຕໍ່ເອກະສານລາຍງານການເງິນ

ຜູ້ບໍລິຫານມີໜ້າທີ່ຮັບຜິດຊອບຕໍ່ການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບຫຼັກການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ **2** ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ບໍລິຫານໄດ້ກຳນົດໄວ້ຢ່າງພຽງພໍເພື່ອສ້າງເອກະສານລາຍງານການເງິນທີ່ປາສະຈາກການລາຍງານບໍ່ຖືກຕ້ອງອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ບໍລິຫານມີໜ້າທີ່ຮັບຜິດຊອບໃນການປະເມີນຄວາມສາມາດ ຂອງບໍລິສັດ ໃນການດຳເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ບໍລິຫານມີຄວາມຕັ້ງໃຈທີ່ຈະຍຸບກິດຈະການ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະກຳມະການກວດສອບໄດ້ຊ່ວຍຜູ້ບໍລິຫານໃນເລື່ອງຄວາມຮັບຜິດຊອບ ຂອງພວກເຂົາຕໍ່ກັບຂັ້ນຕອນໃນການກຽມບົດລາຍງານການເງິນ.

ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ. ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນ ເຊິ່ງລວມທັ້ງການອອກຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງເຊິ່ງບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວ້ວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ. ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ພິຈາລະນາວ່າເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າ ລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ. ພວກເຮົາໄດ້ໃຊ້ການປະເມີນຕ່າມຫຼັກວິຊາຊີບທີ່ຄວນຈະມີຕະຫຼອດການກວດສອບ. ການດຳເນີນງານຂອງພວກເຮົາລວມມີ:

- ລະບຸ ແລະ ປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ, ວາງແຜນ ແລະ ດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫາຫຼັກຖານທີ່ ພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດຢ່າງເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.

- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ແທດເໝາະກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງບໍລິສັດ.

- ປະເມີນຄວາມເໝາະສົມຂອງການນຳໃຊ້ວິທີການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ອຳນວຍການ.

- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ຜູ້ບໍລິຫານໂດຍອີງຕາມ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີປັດໃຈໃຫ້ເກີດຂໍ້ສົງໃສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງບໍລິສັດ ຫຼື ບໍ່. ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງກ່າວໄວ້ໃນບົດລາຍງານຂອງຜູ້ກວດສອບ ຂອງພວກເຮົາກັບຂໍ້ມູນທີ່ກ່ຽວຂ້ອງທີ່ໄດ້ເປີດເຜີຍໃນເອກະສານລາຍງານການເງິນ, ຫຼື ຖ້າການເປີດເຜີຍດັ່ງກ່າວບໍ່ພຽງພໍ ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ. ຂໍ້ສະຫຼຸບຂອງພວກເຮົາຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍຕາມ, ເຫດການ ຫຼື ສະພາບຕົວຈິງໃນອານາຄົດອາດເປັນສາເຫດໃຫ້ບໍລິສັດບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

pwc

ພວກເຮົາໄດ້ສື່ສານກັບຄະນະກຳມະການການກວດສອບກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້, ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກຜ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ພວກເຮົາໄດ້ໃຫ້ຄຳຮັບຮອງແກ່ຄະນະກຳມະການກວດສອບວ່າ ພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດຫລັກຈັນຍາບັນກ່ຽວຂ້ອງກັບຄວາມເປັນອິດສະຫຼະ ແລະ ໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຄວາມສຳພັນທັງໝົດ ລວມເຖິງເລື່ອງອື່ນທີ່ພວກເຮົາເຊື່ອວ່າມີເຫດຜົນທີ່ອາດພິຈາລະນາເຖິງຜົນກະທົບຕໍ່ຄວາມເປັນອິດສະຫຼະ ຂອງພວກເຮົາ ແລະ ຫລັກການທີ່ພວກເຮົາໃຊ້ເພື່ອປ້ອງກັນການຂາດຄວາມເປັນອິດສະຫຼະ.

ຈາກບັນຫາທີ່ປຶກສາກັບຄະນະກຳມະການກວດສອບ ພວກເຮົາໄດ້ພິຈາລະນາບັນຫາເຫຼົ່ານັ້ນແມ່ນບັນຫາທີ່ມີສາລະສຳຄັນທີ່ສຸດໃນການກວດສອບເອກະສານລາຍງານການເງິນຄັ້ງນີ້ ແລະ ກຳນົດເປັນເລື່ອງສຳຄັນໃນການກວດສອບ. ພວກເຮົາໄດ້ອະທິບາຍເລື່ອງເຫຼົ່ານີ້ໃນບົດລາຍງານຂອງຜູ້ກວດສອບ, ຍົກເວັ້ນກົດໝາຍ ຫຼື ຂໍ້ບັງຄັບບໍ່ໃຫ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລື່ອງດັ່ງກ່າວ ຫຼື ໃນສະພາບການທີ່ຍາກຈະເກີດຂຶ້ນ ພວກເຮົາພິຈາລະນາວ່າບໍ່ຄວນສື່ສານເລື່ອງດັ່ງກ່າວໃນບົດລາຍງານຂອງພວກເຮົາ ເພາະການປະຕິບັດດັ່ງກ່າວສາມາດຄາດການໄດ້ຢ່າງສົມເຫດສົມຜົນວ່າຈະມີຜົນກະທົບໃນທາງລົບຫຼາຍກວ່າຜົນປະໂຫຍດ ຕໍ່ສ່ວນໄດ້ເສຍສາທາລະນະຈາກການສື່ສານດັ່ງກ່າວ.

ບໍລິສັດ ພຣາຍອໍເຕີເຮົ້າກຸບເປີ ສ (ລາວ) ຈຳກັດຜູ້ດຽວ.

ອະພິສິດ ທ່ຽງຕັ້ງພົນໄຍ
ຮຸ້ນສ່ວນ
ນະຄອນຫຼວງວຽງຈັນ. ສປປ ລາວ
ວັນທີ: 30 ເມສາ 2019

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານສະຖານະການເງິນ
ສິ້ນສຸດ ວັນທີ 31 ທັນວາ 2018

	ບິດ ອະທິບາຍ	2018 ກີບ	2017 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	3	4.823.430.665	3.571.461.291
ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	4	16.577.627.158	13.672.665.552
ເຄື່ອງໃນສາງ, ສຸດທິ	5	865.481.946	264.901.299
ວັດສະດຸສະໜອງ, ສຸດທິ	6	906.316.624	577.326.228
ເຍື່ອນລໍຖ້າຕັດຕົ້ນທຶນການປຸກຕົ້ນປາມ-ເມັ່ຍປາມເພື່ອ ຂາຍ	7	1.999.044.052	502.229.515
ຊັບສິນໝຸນວຽນອື່ນໆ		1.794.965.888	322.336.928
ລວມຊັບສິນໝຸນວຽນ		**26.966.866.333**	**18.910.920.813**
ຊັບສິນບໍ່ໝຸນວຽນ			
ຊັບສິນບັດຄົງທີ່ ມີຕົວຕົນ, ສຸດທິ	8	20.280.020.977	17.294.354.033
ເຍື່ອນລໍຖ້າຕັດຕົ້ນທຶນການປຸກຕົ້ນປາມ, ສຸດທິ	9	22.507.458.490	22.246.242.852
ລວມຊັບສິນບໍ່ໝຸນວຽນ		**42.787.479.467**	**39.540.596.885**
ລວມຊັບສິນ		**69.754.345.800**	**58.451.517.698**
ໜີ້ສິນ ແລະ ທຶນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	10	9.218.844.391	10.804.535.371
ໜີ້ສິນໝຸນວຽນອື່ນໆ	11	367.107.838	1.788.703.955
ເງິນກູ້ຢືມໄລຍະສັ້ນ	12	426.674.639	-
ລວມໜີ້ສິນໝຸນວຽນ		**10.012.626.868**	**12.593.239.326**
ລວມໜີ້ສິນ		**10.012.626.868**	**12.593.239.326**
ທຶນ			
ທຶນຕົນເອງຂອງຜູ້ຖືຮຸ້ນ	13	50.000.000.000	40.000.000.000
ສ່ວນເພີ່ມທຶນ	13	3.269.466.406	-
ກຳໄລສະສົມ			
ແບ່ງປັນ - ຄົງສະສົມຕາມລະບຽບການ	14	887.496.413	826.098.998
ກຳໄລສະສົມລໍຖ້າແບ່ງປັນ		5.584.756.113	5.032.179.374
		59.741.718.932	**45.858.278.372**
ລວມໜີ້ສິນ ແລະ ທຶນ		**69.754.345.800**	**58.451.517.698**

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 30 ເມສາ 2019

ທ່ານ ວັນສະໜຶ່ມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 30 ເມສາ 2019

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 10 – 25 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານຜົນໄດ້ຮັບ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2018

	ບິດ ອະທິບາຍ	2018 ກີບ	2017 ກີບ
ລາຍຮັບຈາກການຂາຍ ແລະ ການບໍລິການ	15	45.523.277.934	55.381.061.238
ຕົ້ນທຶນໃນການຂາຍ		(38.510.797.543)	(43.392.773.662)
ກຳໄລ ຂັ້ນຕົ້ນ		**7.012.480.391**	**11.988.287.576**
ລາຍຈ່າຍການຂາຍ ແລະ ບໍລິຫານ		(5.836.303.968)	(5.194.255.232)
ລາຍຮັບອື່ນໆ		76.292.749	257.882.314
ຂາດທຶນຈາກອັດຕາແລກປ່ຽນ		(445.532.695)	(1.426.980.907)
ກຳໄລ/(ຂາດທຶນ)ຈາກການດຳເນີນງານກ່ອນອາກອນກຳໄລ	16	**806.936.477**	**5.624.933.751**
ອາກອນກຳໄລ	17	(192.962.323)	(1.585.065.316)
ກຳໄລສຸດທິສຳລັບປີ		**613.974.154**	**4.039.868.435**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ	18	7	78

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ
Lao Agro Tech Public Company

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 30 ເມສາ 2019

ທ່ານ ວັນສະເຫຼີມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 30 ເມສາ 2019

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 10 - 25 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນຕົນເອງຂອງຜູ້ຖືຮຸ້ນ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2018

	ທຶນຈົດທະບຽນ ຖອກແລ້ວ ກີບ	ສ່ວນເພີ່ມທຶນ ກີບ	ກຳໄລສະສົມ ຄ້ຽສະສົມຕາມ ລະບຽບການ ກີບ	ກຳໄລສະສົມລໍຖ້າ ແບ່ງປັນ ກີບ	ລວມ ກີບ
ຍອດເຫຼືອຍົກມາໃນວັນທີ 1 ມັງກອນ 2017	40.000.000.000	-	422.112.154	1.396.297.783	41.818.409.937
ກຳໄລສຳລັບໃນປີ	-	-	-	4.039.868.435	4.039.868.435
ຄ້ຽສະສົມຕາມລະບຽບການ(ບິດອະທິບາຍຂໍ້ທີ 14)	-	-	403.986.844	(403.986.844)	-
ຍອດເຫຼືອທ້າຍປີ ວັນທີ 31 ທັນວາ 2017	**40.000.000.000**	**-**	**826.098.998**	**5.032.179.374**	**45.858.278.372**
ຍອດເຫຼືອຍົກມາໃນວັນທີ 1 ມັງກອນ 2018	40.000.000.000	-	826.098.998	5.032.179.374	45.858.278.372
ກຳໄລສຳລັບໃນປີ	-	-	-	613.974.154	613.974.154
ອອກຮຸ້ນສາມັນ (ບິດອະທິບາຍຂໍ້ທີ 13)	10.000.000.000	3.269.466.406	-	-	13.269.466.406
ຄ້ຽສະສົມຕາມລະບຽບການ(ບິດອະທິບາຍຂໍ້ທີ 14)	-	-	61.397.415	(61.397.415)	-
ຍອດເຫຼືອທ້າຍປີ ວັນທີ 31 ທັນວາ 2018	**50.000.000.000**	**3.269.466.406**	**887.496.413**	**5.584.756.113**	**59.741.718.932**

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ສີດົ່ມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 30 ເມສາ 2019

ທ່ານ ວັນສະເຫຼີມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 30 ເມສາ 2019

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 10 - 25 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2018

	ບິດ ອະທິບາຍ	2018 ກີບ	2017 ກີບ
ກຳໄລກ່ອນເສຍອາກອນ		**806.936.478**	**5.624.933.751**
ລາຍການປັບປຸງ:			
ຄ່າຫຼ້ຍຫ້ຽນ	8	1.751.650.811	1.513.949.093
ຄ່າຕັດຮອນ	9	832.077.389	428.858.221
ຂາດທຶນຈາກການສະສາງຊັບສິນບັດຖຶງທີ່ມີຕົວຕົນອອກ	8	-	2.364.877
ຂາດທຶນຈາກອັດຕາແລກປ່ຽນ		194.212.523	786.262.974
ການປ່ຽນແປງໃນ ທຶນໝຸນວຽນ:			
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(2.904.961.606)	(5.748.922.731)
ເຄື່ອງໃນສາງ, ສຸດທິ		(600.580.647)	337.484.176
ວັດສະດຸສະໜອງ, ສຸດທິ		(328.990.396)	(255.412.573)
ເຍື່ອນລໍຖ້າຕັດຕົ້ນທຶນການປຸກຕົ້ນປາມ-ເບ້ຍປາມເພື່ອຂາຍ		(1.496.814.537)	103.419.483
ຊັບສິນໝຸນວຽນອື່ນໆ		(1.472.628.960)	(574.320.594)
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		(1.690.844.639)	4.775.755.536
ໜີ້ສິນໝຸນວຽນອື່ນໆ		(77.235.125)	115.144.518
ກະແສເງິນສົດຈາກກິດຈະກຳການດຳເນີນງານ, ສຸດທິ		**(4.987.178.709)**	**7.109.516.731**
ອາກອນລາຍໄດ້		(1.537.323.316)	(1.298.349.643)
ເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**(6.524.502.025)**	**5.811.167.088**
ກະແສເງິນສົດຈາກກິດຈະກຳການລົງທຶນ			
ຊື້ຊັບສິນບັດຖຶງທີ		(4.858.460.764)	(2.283.377.726)
ຈ່າຍຄ່າຕົ້ນທຶນການປຸກຕົ້ນປາມ		(1.093.293.027)	(1.338.349.825)
ເງິນສົດໃຊ້ສຸດທິ ໃນກິດຈະກຳການລົງທຶນ		**(5.951.753.791)**	**(3.621.727.551)**
ກະແສເງິນສົດຈາກກິດຈະກຳການເງິນ			
ເງິນສົດຮັບຈາກການເງິນກູ້ຢືມ	12	426.674.639	-
ເງິນສົດຮັບຈາກການອອກຮຸ້ນສາມັນ	13	13.269.466.406	-
ເງິນສົດສຸດທິໃຊ້ໃນກິດຈະກຳການເງິນ		**13.696.141.045**	**-**
ເພີ່ມຂຶ້ນສຸດທິ ໃນເງິນສົດ ແລະ ລາຍການທຽບເທົ່າ ເງິນສົດ		**1.219.885.229**	**2.189.439.537**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ຕົ້ນປີ		3.571.461.291	1.363.578.036
ຂາດທຶນຈາກອັດຕາແລກປ່ຽນໃນເງິນສົດ ແລະ ລາຍການທຽບເທົ່າ ເງິນສົດ		32.084.145	18.443.718
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍປີ		**4.823.430.665**	**3.571.461.291**
ລາຍການສຳຄັນທີ່ບໍ່ແມ່ນເງິນສົດ:			
ການໄດ້ມາຂອງຊັບສິນບັດຖຶງທີ່ມີຕົວຕົນ ທີ່ຍັງບໍ່ໄດ້ຊຳລະ		1.018.171.479	1.139.314.488

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 30 ເມສາ 2019

ທ່ານ ວັນສະເຫຼີມ ສີສຸດຳມັງ
ຫົວໜ້າບັນຊີ - ການເງິນ
ວັນທີ: 30 ເມສາ 2019

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 10 - 25 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

1 ຂໍ້ມູນທົ່ວໄປ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ບໍລິສັດ) ແມ່ນບໍລິສັດ ຈົດທະບຽນ ທີ່ສ້າງຕັ້ງຂຶ້ນ ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ") ມີສຳນັກງານຈົດທະບຽນຕັ້ງຢູ່ ບ້ານວັດໄຕນ້ອຍ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ.

ບໍລິສັດໄດ້ມີການຈຳໜ່າຍຮຸ້ນສາມັນຢູ່ໃນຕະຫຼາດຫຼັກຊັບລາວຄັ້ງທຳອິດໃນ ວັນທີ 25 ກັນຍາ 2018

ກິດຈະກຳຫຼັກຂອງບໍລິສັດ ແມ່ນ ອຸດສາຫະກຳນ້ຳມັນປາມ ເຊິ່ງເລີ່ມຈາກການເພາະປູກເບ້ຍຕົ້ນປາມ, ປູກຕົ້ນປາມ, ຜະລິດ ແລະ ຈຳໜ່າຍຜະລິດຕະພັນປາມໂດຍບໍລິສັດເອງ. ນອກຈາກນີ້ບໍລິສັດຍັງສະໜອງເບ້ຍຕົ້ນປາມໃຫ້ປະຊາຊົນ ສຳລັບການເພາະປູກ ແລະ ເກັບຊື້ຄືນໝາກປາມ. ນອກຈາກນີ້ ບໍລິສັດ ຍັງໄດ້ນຳເຂົ້າສິນຄ້າສຳເລັດຮູບ (ຜະລິດຕະພັນນ້ຳມັນປາມ) ນ້ຳມັນປຸງອາຫານຈາກປະເທດໄທ ເພື່ອຂາຍໃນ ສປປ ລາວ.

ເອກະສານລາຍງານການເງິນສະບັບນີ້ໄດ້ຮັບການຮັບຮອງຈາກຜູ້ບໍລິຫານໃນວັນທີ 30 ເມສາ 2019

2 ນະໂຍບາຍການບັນຊີ

ນະໂຍບາຍການບັນຊີ ທີ່ນຳໃຊ້ເຂົ້າໃນການກະກຽມເອກະສານລາຍງານການເງິນສະບັບນີ້ ໄດ້ກຳນົດໄວ້ ດັ່ງລຸ່ມນີ້:

2.1 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ໄດ້ມີການກະກຽມຕາມວິທີການບັນຊີ ຂອງບໍລິສັດ ທີ່ໄດ້ລະບຸໄວ້ໃນບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນສະບັບນີ້ ເຊິ່ງໄດ້ມີການສ້າງຂຶ້ນບົນພື້ນຖານຕົ້ນທຶນເດີມ.

ອີງຕາມກົດໝາຍວ່າດ້ວຍການບັນຊີ ແລະ ຂໍ້ກຳນົດກ່ຽວກັບການບັນຊີ ແລະ ການກວດສອບບັນຊີ ໃນສ່ວນຫຼັກຊັບພາຍໃຕ້ ສຳນັກງານຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (LSCO) ໃນ ສປປ ລາວ, ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງສ້າງເອກະສານລາຍງານການເງິນຕາມມາດຕະຖານລາຍງານການເງິນສາກົນ (IFRS) ເຊິ່ງເປັນວິທີການບັນຊີທີ່ຮັບຮອງໂດຍທົ່ວໄປ. ປັດຈຸບັນ LSCO ຍັງຜ່ອນຜັນ ແລະ ອານຸຍາດໃຫ້ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບປະຕິບັດຕາມນະໂຍບາຍການບັນຊີທີ່ສຳຄັນ ຂອງບໍລິສັດ ແຕ່ສິ່ງເສີມໃຫ້ບໍລິສັດໃນຕະຫຼາດຫຼັກຊັບນຳໃຊ້ IFRS ເນື່ອງຈາກວ່າມັນຈະຖືກບັງຄັບໃຫ້ໃຊ້ໃນອະນາຄົດອັນໃກ້ນີ້. ໃນ ສປປ ລາວ, ມີຄວາມແຕກຕ່າງທີ່ມີສາລະສຳຄັນລະຫວ່າງບັນຊີ ຂອງບໍລິສັດ ກັບ IFRS ໃນຫຼາຍໆດ້ານເຊັ່ນ: ຊັບສົມບັດຄົງທີ່ມີຕົວຕົນ, ສັນຍາເຊົ່າ ແລະ ອາກອນລາຍໄດ້. ສະນັ້ນ, ຜູ້ໃຊ້ເອກະສານລາຍງານການເງິນຄວນເຂົ້າໃຈຄວາມແຕກຕ່າງ ແລະ ຜົນກະທົບທີ່ອາດມີຕໍ່ການຕັດສິນໃຈໃນການນຳໃຊ້ຂໍ້ມູນໃນເອກະສານລາຍງານການເງິນ.

ໃນການສ້າງເອກະສານລາຍງານການເງິນ ໄດ້ກຳນົດອອກໂດຍຜູ້ບໍລິຫານ ເຊິ່ງຜູ້ບໍລິຫານໄດ້ສ້າງການຄາດຄະເນ ແລະ ສົມມຸດຖານຫຼາຍປະການ ເພື່ອສະແດງເຖິງຜົນກະທົບຕໍ່ມູນຄ່າຂອງຊັບສິນ ແລະ ໜີ້ສິນ ທີ່ໄດ້ລາຍງານການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ສ້າງເອກະສານລາຍງານການເງິນ ແລະ ຈຳນວນເງິນ ລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາທີ່ໄດ້ລາຍງານ ສະນັ້ນ ຕົວເລກຄາດຄະເນປະຕິບັດດັ່ງກ່າວ ຕ້ອງສ້າງຂຶ້ນບົນພື້ນຖານຄວາມຮູ້ທີ່ດີທີ່ສຸດ ຂອງຝ່າຍບໍລິຫານ ກ່ຽວກັບ ເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ ຊຶ່ງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນເບື້ອງຕົ້ນ.

2 ນະໂຍບາຍການບັນຊີ (ຕໍ່)

2.1 ພື້ນຖານໃນການກະກຽມ (ຕໍ່)

ບໍລິສັດໄດ້ນຳສະເໜີຂໍ້ມູນທາງການເງິນ (ບໍ່ໄດ້ກວດສອບ) ສຳລັບສາມເດືອນສິ້ນສຸດວັນທີ 31 ທັນວາ 2018 (ໂດຍຫຍໍ້) ທີ່ລະ ບຸໃນບົດເອກະສານຊ້ອນທ້າຍຂໍ້ທີ 21 ຄືຂໍ້ມູນເພີ່ມເຕີມ. ຂໍ້ມູນເພີ່ມເຕີມດັ່ງກ່າວນີ້ແມ່ນອີງຕາມການລາຍງານ ແລະ ກົດລະບຽບກ່ຽວກັບການເປີດເຜີຍ ເລກທີ No.007/LSCO, ລົງວັນທີ 3 ເມສາ 2014, ອອກໂດຍຫ້ອງການ ຄະນະກຳມະການຄຸ້ມຄອງຫຼັກຊັບແຫ່ງປະເທດລາວ.

2.2 ການຕີມູນຄ່າເງິນຕາຕ່າງປະເທດ

ລາຍການເຄື່ອນໄຫວທີ່ເປັນສະກຸນເງິນຕາຕ່າງປະເທດ ໄດ້ຖືກຕີມູນຄ່າເປັນສະກຸນເງິນກີບ ("ກີບ") ດ້ວຍການນຳໃຊ້ອັດຕາແລກປ່ຽນໃນມື້ທີ່ລາຍການເກີດຂຶ້ນ.

ຊັບສິນ ແລະ ໜີ້ສິນການເງິນ ໃນມື້ທີ່ສະແດງໃນໃບລາຍງາຍຖານະການເງິນ ທີ່ເປັນສະກຸນເງິນອື່ນແມ່ນໄດ້ຖືກປ່ຽນຄ່າເປັນສະກຸນເງິນກີບ ໂດຍນຳໃຊ້ອັດຕາແລກປ່ຽນໃນມື້ຂອງໃບລາຍງານສະຖານະການເງິນ.

2.3 ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ

ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆແມ່ນຖືກບັນທຶກຕາມຕົວຈິງຂອງມູນຄ່າໃນໃບເກັບເງິນ ແລະ ການປະເມີນຕໍ່ມາແມ່ນນຳມູນຄ່າຍັງເຫຼືອລົບເງິນທີ່ຫັກເພື່ອໜີ້ສົງໃສຈະເສຍ ຍົກເວັ້ນໜີ້ຕ້ອງຮັບຈາກການສົ່ງເສີມປຸກຕົ້ນປາມ ໂດຍອີງຕາມການກວດກາມູນຄ່າຄ້າງຊຳລະທັງໝົດໃນທ້າຍປີ. ຈຳນວນເງິນທີ່ຫັກຂອງໜີ້ສົງໃສຈະເສຍແມ່ນສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີ ຂອງໜີ້ຕ້ອງຮັບ ແລະ ມູນຄ່າທີ່ຄາດວ່າຈະເກັບຄືນໄດ້. ໜີ້ເສຍແມ່ນຈະຖືກສະສາງໃນປີທີ່ມີໜີ້ເສຍເກີດຂຶ້ນ ເຊິ່ງຈະຖືກຮັບຮູ້ເຂົ້າໃນໃບລາຍງານຜົນໄດ້ຮັບ ພາຍໃຕ້ລາຍຈ່າຍບໍລິຫານ.

2.4 ສິນຄ້າໃນສາງ

ສິນຄ້າໃນສາງໄດ້ສະແດງໃນມູນຄ່າຕົ້ນທຶນ ຫຼື ມູນຄ່າສຸດທິ ທີ່ຈະໄດ້ຮັບທີ່ຕ່ຳກວ່າ. ຕົ້ນທຶນໄດ້ຖືກກຳນົດໂດຍຕົ້ນທຶນສະເລ່ຍທີ່ເກີດຂຶ້ນຈິງຂອງການຜະລິດທີ່ເກີດຂຶ້ນໃນປີ ໂດຍໃຊ້ວິທີ ເຂົ້າກ່ອນ ອອກກ່ອນ ("FIFO"). ຕົ້ນທຶນຂອງສິນຄ້າສຳເລັດຮູບປະກອບມີ ວັດຖຸດິບທາງກົງ. ຄ່າແຮງງານທາງກົງ ແລະ ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວກັບການຜະລິດທາງກົງ. ຕົ້ນທຶນຂອງການຈັດຊື້ ປະກອບມີ ສອງສ່ວນຄື ລາຄາຊື້ ແລະ ລາຍຈ່າຍທາງກົງຂອງການໄດ້ມາຂອງສິນຄ້າໃນສາງ ເຊັ່ນ: ຄ່າພາສີນຳເຂົ້າ ແລະ ຄ່າຂົນສົ່ງ, ຫັກໃຫ້ສ່ວນຫລຸດ, ຄ່າເຜື່ອການຫຼຸດລົງ ຫຼື ສ່ວນຫລຸດ. ມູນຄ່າສຸດທິ ທີ່ຈະໄດ້ຮັບແມ່ນປະເມີນລາຄາຂາຍໄດ້ຕາມປົກກະຕິຂອງທຸລະກິດ ຫັກລາຍຈ່າຍທີ່ສຳເລັດ ແລະ ລາຍຈ່າຍໃນການຂາຍ. ຕັ້ງສຳຮອງມູນຄ່າເຊື່ອມຈະຕັ້ງໃນກໍລະນີທີ່ຈຳເປັນ ສຳລັບສິນຄ້າທີ່ຫລ້າສະໄໝ, ເຄື່ອນໄຫວຊ້າ ແລະ ສິນຄ້າຄົງເຫຼືອທີ່ມີຂໍ້ຕຳນິ.

2 ນະໂຍບາຍການບັນຊີ (ຕໍ່)

2.5 ວັດສະດຸສະໜອງ

ວັດສະດຸສະໜອງແມ່ນຖືກລະບຸໃນລາຄາຕົ້ນທຶນ ແລະ ກຳນົດ ໂດຍວິທີ ຕົ້ນທຶນສະເລ່ຍ. ຕົ້ນທຶນໃນການຊື້ ປະກອບດ້ວຍລາຄາຊື້ ແລະ ລາຍຈ່າຍທີ່ກ່ຽວຂ້ອງ ໂດຍກົງກັບການໄດ້ມາຂອງວັດສະດຸສະໜອງ ເຊັ່ນ ຄ່າພາສີຂາເຂົ້າ ແລະ ຄ່າຂົນສົ່ງ ຫັກສ່ວນລຸດ ຄ່າເຜື່ອການຫຼຸດລົງ ຫຼື ສ່ວນຫລຸດຕາມເງື່ອນໄຂ. ການຕັ້ງສຳຮອງມູນຄ່າເຊື່ອມ ແມ່ນຄິດໄລ່ເມື່ອເຫັນຈຳເປັນສຳລັບສິນຄ້າລ້າສະໄໝ, ເຄື່ອນໄຫວຊ້າ ແລະ ເປເພ.

2.6 ຊັບສິນບັດຄົງທີ່ມີຕົວຕົນ

ລາຍການຂອງຊັບສິນບັດຄົງທີ່ມີຕົວຕົນ ໄດ້ຖືກບັນທຶກບັນຊີຕາມມູນຄ່າຕົ້ນທຶນເດີມຫັກດ້ວຍຄ່າຫລຸ້ຍຫ້ຽນສະສົມ. ມູນຄ່າຕົ້ນທຶນເດີມປະກອບມີ ລາຍຈ່າຍທາງກົງ ຂອງການໄດ້ມາຂອງລາຍການຊັບສິນບັດນັ້ນ. ລາຍຈ່າຍໃນເວລາຕໍ່ມາໄດ້ລວມເຂົ້າໃນມູນຄ່າຕາມບັນຊີຂອງຊັບສິນບັດ ຫຼື ຮັບຮູ້ເປັນແຕ່ລະຊັບສິນບັດແຍກຕ່າງຫາກ ຕາມຄວາມເໝາະສົມ.ເມື່ອມີຄວາມເປັນໄປໄດ້ວ່າຜົນປະໂຫຍດທາງເສດຖະກິດໃນອະນາຄົດທີ່ກ່ຽວຂ້ອງກັບລາຍການຊັບສິນບັດດັ່ງກ່າວ ຈະກັບເຂົ້າສູ່ບໍລິສັດ ແລະ ຄ່າໃຊ້ຈ່າຍຂອງລາຍການນັ້ນສາມາດປະເມີນ ໄດ້ຢ່າງໜ້າເຊື່ອຖື.

ທີ່ດິນບໍ່ໄດ້ຄິດຄ່າຫລຸ້ຍຫ້ຽນ, ເຊິ່ງຄ່າຫລຸ້ຍຫ້ຽນແມ່ນໄດ້ຄິດໄລ່ເພື່ອຈະຕັດລາຍຈ່າຍຫັກມູນຄ່າຍັງເຫຼືອຂອງແຕ່ລະລາຍການຊັບສິນບັດຕາມອາຍຸການໃຊ້ງານທີ່ໄດ້ຄາດຄະເນໂດຍການຄິດໄລ່ຄ່າຫຼ້ຍຫ້ຽນບົນຫຼັກການ ການຄິດໄລ່ ແບບຄົງຕົວ.

ປະເມີນອາຍຸການໃຊ້ງານ ຂອງແຕ່ລະປະເພດຂອງຊັບສິນບັດດັ່ງຕໍ່ໄປນີ້:

	ປີ
ອາຄານ ແລະ ໂຄງສ້າງພື້ນຖານ	5 - 40
ເຟີນີເຈີ ແລະ ອຸປະກອນ	3 - 5
ເຄື່ອງຈັກ ແລະ ອຸປະກອນ	5 - 20
ຍານພາຫະນະ	3 - 5

ໃນກໍລະນີທີ່ມູນຄ່າຕາມບັນຊີຂອງຊັບສິນບັດສູງກວ່າມູນຄ່າທີ່ຄາດຄະເນວ່າຈະໄດ້ຮັບຄືນ ຈະບັນທຶກລົງທັນທີ ເປັນຈຳນວນທີ່ຈະໄດ້ຮັບຄືນ.

ຄ່າສ້ອມແປງ ແລະ ການບຳລຸງຮັກສາ ໄດ້ຖືກຮັບຮູ້ ເຂົ້າໃນໃບລາຍງານຜົນໄດ້ຮັບ ໃນປີການບັນຊີທີ່ເກີດຂຶ້ນຕົວຈິງ. ຄ່າໃຊ້ຈ່າຍໃນການສ້ອມແປງໃຫຍ່ສ່ວນເພີ່ມແມ່ນຈະເພີ່ມເຂົ້າໃນຍອດເຫຼືອໃນບັນຊີຂອງຊັບສິນບັດ ເມື່ອມີຄວາມເປັນໄປໄດ້ວ່າ ຈະເກີດຜົນປະໂຫຍດດ້ານເສດຖະກິດໃນອະນາຄົດ ໃນຈຳນວນທີ່ເກີນກວ່າມູນຄ່າເດີມ ຂອງຊັບສິນບັດທີ່ມີຢູ່ໃນປັດຈຸບັນທີ່ຈະກັບເຂົ້າສູ່ບໍລິສັດ ຕົ້ນທຶນຄ່າສ້ອມແປງໃຫຍ່ຈະຖືກຫັກຄ່າຫຼ້ຍຫ້ຽນຕາມອາຍຸການນຳໃຊ້ທີ່ຍັງເຫຼືອຂອງຊັບສິນບັດທີ່ກ່ຽວຂ້ອງ.

ກຳໄລ ແລະ ຂາດທຶນ ຈາກການຂາຍຊັບສິນບັດຄົງທີ່ ໄດ້ມາຈາກການສົມທຽບລາຄາຂາຍ ກັບ ມູນຄ່າຕາມບັນຊີ ແລະ ຈົດເຂົ້າໃນໃບລາຍງານຜົນໄດ້ຮັບ.

2 ນະໂຍບາຍການບັນຊີ (ຕໍ່)

2.7 ເຍື່ອນລໍຖ້າຕັດ ຕົ້ນທຶນການປູກຕົ້ນປາມ

ເຍື່ອນລໍຖ້າຕັດຕົ້ນທຶນໃນການປູກປາມແມ່ນຕົ້ນທຶນສະສົມໃນການປູກຕົ້ນປາມ ເຊິ່ງລວມມີຄ່າບຸກເບີກທີ່ດິນ ຄ່າແຮງງານ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວຂ້ອງໂດຍກົງກັບການປູກຕົ້ນປາມ. ມູນຄ່າ ຂອງຕົ້ນປາມແມ່ນວັດໂດຍການເອົາຕົ້ນທຶນໃນການປູກທັງໝົດຫັກດ້ວຍມູນຄ່າຕັດຮອນສະສົມ ແລະ ຄ່າເຜື່ອສຳລັບການສູນເສຍ ຂອງຕົ້ນປາມ. ຕົ້ນປາມທີ່ພ້ອມໃຫ້ເກັບກ່ຽວຈະຖືກຕັດຮອນໄປເປັນຕົ້ນທຶນ ຂອງວັດຖຸດິບໃນການຜະລິດ ໂດຍອາຍຸການຕັດຮອນແມ່ນ 26 ປີ ຕາມອາຍຸການທີ່ຄາດວ່າຈະໄດ້ຮັບຜົນປະໂຫຍດທາງເສດຖະກິດ.

2.8 ເຍື່ອນຊຳລະຕົ້ນທຶນການປູກຕົ້ນປາມ-ເບັຍປາມ

ເຍື່ອນຊຳລະຕົ້ນທຶນການປູກເບັຍຕົ້ນປາມ ແມ່ນສະແດງຢູ່ໃນໃບສະຫລຸບຊັບສົມບັດໃນຕົ້ນທຶນຫັກຄ່າເຜື່ອສະສົມ ສຳລັບຄ່າເຊື່ອມມູນຄ່າ. ຕົ້ນທຶນແມ່ນປະກອບມີທັງ ລາຄາຊື້ເບັຍຕົ້ນປາມ ແລະ ລາຍຈ່າຍໂດຍກົງຂອງການໄດ້ມາເບັຍຕົ້ນປາມ ເຊັ່ນ ຄ່າພາສີນຳເຂົ້າ ແລະ ຄ່າຂົນສົ່ງ.

2.9 ການຮັບຮູ້ລາຍຮັບ

ລາຍຮັບຈາກການຂາຍສິນຄ້າ ແມ່ນຮັບຮູ້ ເມື່ອຄວາມສ່ຽງທີ່ເປັນສາລະສຳຄັນ ແລະ ຜົນຕອບແທນຂອງຄວາມເປັນເຈົ້າຂອງສິນຄ້າ ໄດ້ໂອນໃຫ້ກັບຜູ້ຊື້ສິນຄ້າ. ເຊິ່ງໂດຍທົ່ວໄປ ອີງໃສ່ເວລາທີ່ບໍລິສັດໄດ້ມອບສິນຄ້າໃຫ້ກັບລູກຄ້າ ຕາມ ໄລຍະເວລາການສົ່ງມອບ ແລະ ເງື່ອນໄຂທີ່ຕົກລົງກັນ.

ລາຍຮັບຈາກການໃຫ້ບໍລິການແມ່ນຮັບຮູ້ເມື່ອໄດ້ມີການໃຫ້ບໍລິການຕໍ່ກັບລູກຄ້າ, ເຊິ່ງໂດຍທົ່ວໄປແລ້ວ ແມ່ນຂຶ້ນກັບການຍອມຮັບໃນການສົ່ງມອບບໍລິການ.

ລາຍຮັບອື່ນໆ ແມ່ນຮັບຮູ້ຕາມພື້ນຖານລວມນີ້:

- ລາຍຮັບຈາກການຂາຍການປາມແມ່ນຮັບຮູ້ເມື່ອການປາມໄດ້ຖືກສົ່ງໃຫ້ກັບລູກຄ້າຕາມ ໄລຍະເວລາການສົ່ງມອບ ແລະ ເງື່ອນໄຂທີ່ຕົກລົງກັນ.

2.10 ອາກອນລາຍໄດ້

ອາກອນລາຍໄດ້ແມ່ນໝາຍເຖິງອາກອນກຳໄລປະຈຳປີ ກຳນົດໂດຍອີງຕາມກົດໝາຍວ່ອຍສາອາກອນຂອງ ສປປ ລາວ.

3. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	2018 ກີບ	2017 ກີບ
ເງິນສົດໃນມື	62.409.481	64.990.038
ເງິນຝາກໃນທະນາຄານທີ່ສາມາດຖອນເກັບໄດ້ໃນເວລາທີ່ຕ້ອງການ (i)	4.761.021.184	3.506.471.253
	4.823.430.665	**3.571.461.291**

(i) ເງິນຝາກໃນທະນະຄານ ລວມມີສາມສະກຸນເງິນ ແມ່ນມີ ສະກຸນ ໂດລາ, ກີບ ແລະ ບາດ ໃນບັ້ນຊີເງິນຝາກ ກະແສລາຍວັນ ກັບທະນະຄານພາຍໃນປະເທດ ແລະ ທະນະຄານສາຂາຕ່າງປະເທດ.

4. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ

	2018 ກີບ	2017 ກີບ
ໜີ້ຕ້ອງຮັບການຄ້າ (i)	16.114.033.158	13.672.665.552
ໜີ້ຕ້ອງຮັບອື່ນໆ	463.594.000	-
ຫັກ: ຄ່າສຳຮອງເສຍມູນຄ່າ	-	-
	16.577.627.158	**13.672.665.552**

(i) ໜີ້ຕ້ອງຮັບການຄ້າປະກອບມີໜີ້ຕ້ອງຮັບຈາກການຂາຍເບ້ຍຕົ້ນປາມ ກັບການບໍລິການການປູກ ແລະ ສິນຄ້າ ສຳເລັດຮູບພາຍໃນປີ.

5. ສິນຄ້າໃນສາງ. ສຸດທິ

	2018 ກີບ	2017 ກີບ
ສິນຄ້າສຳເລັດຮູບ [i]	865.481.946	264.901.299
ຫັກ: ຄ່າສູນເສຍມູນຄ່າ ສຳລັບສິນຄ້າລ້າສະໄໝ ແລະ ເຄື່ອນໄຫວຊ້າ	-	-
	865.481.946	**264.901.299**

(i) ສິນຄ້າສຳເລັດຮູບສ່ວນໃຫຍ່ປະກອບມີນ້ຳມັນປຸງອາຫານ ແລະ ນ້ຳມັນກາຊວນຊີວະພາບ

6. ວັດສະດຸສະໜອງ. ສຸດທິ

	2018 ກີບ	2017 ກີບ
ປຸ໋ຍສຳລັບການປູກຕົ້ນປາມ	116.640.414	250.174.381
ນ້ຳມັນປາມດິບ (CPO)	307.655.716	114.995.991
ອຸປະກອນໂຮງງານອື່ນໆ	482.020.494	212.155.856
ຫັກ: ຄ່າສູນເສຍມູນຄ່າ ສຳລັບສິນຄ້າລ້າສະໄໝ ແລະ ເຄື່ອນໄຫວຊ້າ	-	-
	906.316.624	**577.326.228**

7. ເຍື່ອນລ໋ຳຄ້ຳຕັດຕົ້ນທຶນການປູກຕົ້ນປາມ-ເບັຍປາມເພື່ອຂາຍ

ຕົ້ນທຶນຂອງເບັຍຕົ້ນປາມປະກອບມີ ລາຄາຊື້ເມັດປາມ ແລະ ລາຍຈ່າຍທາງກົງຂອງການໄດ້ມາເຊິ່ງເບັຍຕົ້ນປາມເຊັ່ນ ຄ່າ ແຮງງານ ແລະ ປຸ໋ຍ.

8. ຊັບສິນຄົງທີ່ມີຕົວຕົນ, ສຸດທິ

	ທີ່ດິນ ກີບ	ອາຄານ ກີບ	ເຄື່ອງຈັກ ແລະ ອຸປະກອນ ກີບ	ຍານພາຫະນະ ກີບ	ເຟີນີເຈີ ແລະ ເຄື່ອງໃຊ້ ຫ້ອງການ ກີບ	ຊັບສິນທີ່ຢູ່ໃນ ລະຫວ່າງການ ກໍ່ສ້າງ ແລະ ຕິດ ຕັ້ງ ກີບ	ລວມ ກີບ
ທ້າຍປີວັນທີ 31 ທັນວາ 2018							
ຍອດຍົກມາຕາມບັນຊີ, ສຸດທິ	5.613.542.900	2.663.735.644	5.709.527.465	1.458.422.051	203.568.729	1.645.557.244	17.294.354.033
ເພີ່ມຂຶ້ນ	-	-	80.582.105	23.300.000	58.670.307	4.574.765.343	4.737.317.755
ສະສາງ	-	-	-	-	-	-	-
ໂອນ ເຂົ້າ/(ອອກ)	-	-	345.700.000	-	-	(345.700.000)	-
ຄ່າຫລຸ້ຍຫ້ຽນ	-	(269.609.328)	(666.383.326)	(664.149.703)	(151.508.454)	-	(1.751.650.811)
ມູນຄ່າຍັງເຫຼືອຕາມບັນຊີ, ສຸດທິ	**5.613.542.900**	**2.394.126.316**	**5.469.426.244**	**817.572.348**	**110.730.582**	**5.874.622.587**	**20.280.020.977**
ໃນວັນທີ 31 ທັນວາ 2018							
ຕົ້ນທຶນ	5.613.542.900	3.377.752.756	7.934.446.924	3.449.233.181	578.664.570	5.874.622.587	26.828.262.918
ຫັກ: ຄ່າຫລຸ້ຍຫ້ຽນສະສົມ	-	(983.626.440)	(2.465.020.680)	(2.631.660.833)	(467.933.988)	-	(6.548.241.941)
ມູນຄ່າຍັງເຫຼືອຕາມບັນຊີ, ສຸດທິ	**5.613.542.900**	**2.394.126.316**	**5.469.426.244**	**817.572.348**	**110.730.582**	**5.874.622.587**	**20.280.020.977**

8. ຊັບສິນຄົງທີ່ມີຕົວຕົນ, ສຸດທິ (ຕໍ່)

	ທີ່ດິນ ກີບ	ອາຄານ ກີບ	ເຄື່ອງຈັກ ແລະ ອຸປະກອນ ກີບ	ຍານພາຫະນະ ກີບ	ເຟີນີເຈີ ແລະ ເຄື່ອງໃຊ້ ຫ້ອງການ ກີບ	ຊັບສິນທີ່ຢູ່ໃນ ລະຫວ່າງການ ກໍ່ສ້າງ ແລະ ຕິດ ຕັ້ງ ກີບ	ລວມ ກີບ
ທ້າຍປີວັນທີ 31 ທັນວາ 2017							
ຍອດຍົກມາຕາມບັນຊີ, ສຸດທິ	5.613.542.900	2.419.191.169	4.924.520.779	1.783.416.923	131.477.199	1.139.624.692	16.011.773.662
ເພີ່ມຂຶ້ນ	-	-	36.015.596	331.055.481	223.710.378	2.208.112.886	2.798.894.341
ໂອນ ເຂົ້າ/(ອອກ)	-	-	-	-	(2.364.877)	-	(2.364.877)
ຄ່າຫລຸ້ຍຫ້ຽນ	-	461.469.325	1.240.711.009	-	-	(1.702.180.334)	-
	-	(216.924.850)	(491.719.919)	(656.050.353)	(149.253.971)	-	(1.513.949.093)
ມູນຄ່າຍັງເຫຼືອຕາມບັນຊີ, ສຸດທິ	**5.613.542.900**	**2.663.735.644**	**5.709.527.465**	**1.458.422.051**	**203.568.729**	**1.645.557.244**	**17.294.354.033**
ໃນວັນທີ 31 ທັນວາ 2017							
ຕົ້ນທຶນ	5.613.542.900	3.377.752.756	7.508.164.819	3.425.933.181	531.344.960	1.645.557.244	22.102.295.860
ຫັກ: ຄ່າຫລຸ້ຍຫ້ຽນສະສົມ	-	(714.017.112)	(1.798.637.354)	(1.967.511.130)	(327.776.231)	-	(4.807.941.827)
ມູນຄ່າຍັງເຫຼືອຕາມບັນຊີ, ສຸດທິ	**5.613.542.900**	**2.663.735.644**	**5.709.527.465**	**1.458.422.051**	**203.568.729**	**1.645.557.244**	**17.294.354.033**

9. ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ. ສຸດທິ

	2018 ກີບ	2017 ກີບ
ຍອດຍົກມາ	22.246.242.852	21.346.758.816
ເພີ່ມຂຶ້ນ	1.093.293.027	1.328.342.257
ຫັກ: ຄ່າຕັດຮອນ	(832.077.389)	(428.858.221)
ຍອດເຫຼືອທ້າຍ	**22.507.458.490**	**22.246.242.852**
ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ	23.787.246.095	22.693.953.068
ຫັກ: ຄ່າຕັດຮອນສະສົມ	(1.279.787.605)	(447.710.216)
	22.507.458.490	**22.246.242.852**

10 ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	2018 ກີບ	2017 ກີບ
ໜີ້ຕ້ອງສົ່ງການຄ້າ [(i)]	7.809.282.348	9.256.959.812
ໜີ້ຕ້ອງສົ່ງອື່ນໆ[(ii)]	1.409.562.043	1.547.575.559
	9.218.844.391	**10.804.535.371**

(i) ໜີ້ຕ້ອງສົ່ງການຄ້າສ່ວນໃຫຍ່ປະກອບມີ ສິນຄ້າສຳເລັດຮູບ (ຜະລິດຕະພັນນ້ຳມັນປາມ ສຳລັບປຸງແຕ່ງອາຫານ) ນຳເຂົ້າຈາກປະເທດໄທ ເພື່ອຂາຍໃນ ສປປ ລາວ. ມູນຄ່ານີ້ປະກອບມີໜີ້ຕ້ອງສົ່ງໃຫ້ບໍລິສັດ OPG Tech ເຊິ່ງ ເປັນພາກສ່ວນທີ່ກ່ຽວຂ້ອງກັບບໍລິສັດ ຈຳນວນ 7.620.572.959 ກີບ (ປີ 2017: 8.108.377.808) (ບົດອະທິບາຍຂໍ້ 19.2)

(ii) ໜີ້ຕ້ອງສົ່ງອື່ນໆ ສ່ວນໃຫຍ່ປະກອບມີ ຄ່າກວດສອບ. ຄ່າທີ່ປຶກສາທາງການເງິນ ແລະ ກົດໝາຍ ແລະ ຕົ້ນທຶນໃນ ການຊື້ເຄື່ອງຈັກ ແລະ ລົດບັນທຸກໃຊ້ໃນການເພາະປູກ. ໃນມູນຄ່ານີ້ປະກອບມີໜີ້ຕ້ອງສົ່ງໃຫ້ OPG Tech ເຊິ່ງ ເປັນພາກສ່ວນທີ່ກ່ຽວຂ້ອງກັບບໍລິສັດ ຈຳນວນ 1.069.856.493 ກີບ (ປີ 2017: 1.249.034.584 ກີບ) (ບົດອະທິບາຍຂໍ້ 19.2)

11. ໜີ້ສິນໝຸນວຽນອື່ນໆ

	2018 ກີບ	2017 ກີບ
ອາກອນລາຍໄດ້ຄ້າງຈ່າຍ	192.962.323	1.537.323.316
ອາກອນມູນຄ່າເພີ່ມ ("VAT") ຕ້ອງຈ່າຍ	154.234.118	146.451.452
ເງິນຕອບຄ້າງຈ່າຍ	19.911.397	104.929.187
	367.107.838	**1.788.703.955**

12. ເງິນກູ້ຢືມໄລຍະສັ້ນ

	2018 ກີບ	2017 ກີບ
ທະນາຄານລາວຫວຽດ	426.674.639	-

ໃນວັນທີ 2 ສິງຫາ 2018, ບໍລິສັດໄດ້ມີການເຊັນສັນຍາກູ້ຢືມເງິນໄລຍະສັ້ນກັບທະນາຄານລາວຫວຽດ ເຊິ່ງມີລາຍ ລະອຽດດັ່ງລຸ່ມນີ້:

ວົງເງິນກູ້ຢືມທັງໝົດ (ກີບ)	ເງິນກູ້ (ກີບ)	ຊຳລະຄືນ (ກີບ)	ຍອດເຫຼືອ (ກີບ)	ໄລຍະເວລາການກູ້ຢືມ ແລະ ກຳນົດການຈ່າຍຄືນ	ອັດຕາດອກເບ້ຍ	ຫຼັກຊັບຄ้ำປะกัน
3.000.000.000	1.394.753.664	968.079.024	426.674.639	6 ເດືອນ, ເງິນກູ້ ແລະ ດອກເບ້ຍ ທີ່ຕ້ອງຈ່າຍຕໍ່ ເດືອນ.	9.50%	1. ດິນ ເລກທີ 474 ຊື່ ເປັນເຈົ້າຂອງບໍລິສັດລາວອາ ໂກຣເທັກ, ບ້ານໜອງຄັນຄູ , ເມືອງ ນາຊາຍທອງ, ນະຄອນຫຼວງວຽງຈັນ. 2. ດິນ ເລກທີ 473 ຊື່ ເປັນເຈົ້າຂອງບໍລິສັດລາວອາ ໂກຣເທັກ, ບ້ານໜອງຄັນຄູ , ເມືອງ ນາຊາຍທອງ, ນະຄອນຫຼວງວຽງຈັນ. 3. ດິນ ເລກທີ 362 ຊື່ ເປັນເຈົ້າຂອງບໍລິສັດລາວອາ ໂກຣເທັກ, ບ້ານໜອງຄັນຄູ , ເມືອງ ນາຊາຍທອງ, ນະຄອນຫຼວງວຽງຈັນ.

13. ທຶນຕົນເອງ ຂອງຜູ້ຖືຮຸ້ນ

	ຈຳນວນຮຸ້ນ ຮຸ້ນ	ທຶນຈົດທະບຽນ ກີບ	ສ່ວນເກີນ ກີບ	ລວມ ກີບ
ວັນທີ 1 ມັງກອນ 2017	80.000.000	40.000.000.000	-	40.000.000.000
ອອກຮຸ້ນໃໝ່	-	-	-	-
ວັນທີ 31 ທັນວາ 2017	**80.000.000**	**40.000.000.000**	**-**	**40.000.000.000**
ວັນທີ 1 ມັງກອນ 2018	80.000.000	40.000.000.000	-	40.000.000.000
ອອກຮຸ້ນໃໝ່	20.000.000	10.000.000.000	3.269.466.406	13.269.466.406
ໃນວັນທີ 31 ທັນວາ 2018	**100.000.000**	**50.000.000.000**	**3.269.466.406**	**53.269.466.406**

ໃນປີ 2017, ກອງປະຊຸມຜູ້ບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນໄດ້ຜ່ານການລົງນາມໃນການອອກຮຸ້ນໃໝ່ຈຳນວນ 20.000.000 ຮຸ້ນທີ່ມີມູນຄ່າ 500 ກີບ (ຄິດເປັນມູນຄ່າ 10.000.000.000 ກີບ) ເພື່ອມີຈຸດປະສົງນຳສະເໜີຂາຍຢູ່ໃນຕະຫລາດຫຼັກຊັບລາວ ("IPO"). ເຊິ່ງ ຈຳນວນຮຸ້ນໄດ້ເພີ່ມຈາກ 80.000.000 ຮຸ້ນເປັນ 100.000.000 ຮຸ້ນ.

ໃນວັນທີ 30 ສິງຫາ 2018, ຫ້ອງການຄະນະກຳມະການຄຸ້ມຄອງຫຼັກຊັບແຫ່ງ ສປປ ລາວ (LSCO) ໄດ້ອອກແຈ້ງການເລກ 0019 / LSCO ເພື່ອອະນຸມັດການຂາຍຮຸ້ນຂອງບໍລິສັດຈຳນວນ 20.000.000 ຮຸ້ນທີ່ມີມູນຄ່າ 500 ກີບ ຕໍ່ຮຸ້ນໃນຕະຫຼາດຫັກຊັບລາວ. ບໍລິສັດ ໄດ້ສະເໜີຂາຍຮຸ້ນດັ່ງກ່າວດ້ວຍມູນຄ່າໜ້າໃບຮຸ້ນ 500 ກີບ ຕໍ່ຮຸ້ນເຊິ່ງມີມູນຄ່າ 10.000.000.000 ກີບ ພາຍໃຕ້ຂັ້ນຕອນຂອງ IPO ໂດຍມີລາຄາຂາຍແມ່ນ 700 ກີບ ຕໍ່ຮຸ້ນ ສຳລັບນັກລົງທຶນ. ບໍລິສັດໄດ້ມີສ່ວນເກີນທຶນຈາກການຂາຍຮຸ້ນສາມັນໂດຍມີມູນຄ່າ 4.000.000.000 ກີບ ແລະ ໄດ້ມີການຫັກສ່ວນເກີນທຶນດັ່ງກ່າວກັບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ ເຊິ່ງມີມູນຄ່າ 730.533.594 ກີບ. ດັ່ງນັ້ນມູນຄ່າສຸດທິຂອງສ່ວນເພີ່ມທຶນແມ່ນ 3.269.466.406 ກີບ.

ໃນວັນທີ 31 ທັນວາ 2018 ຈຳນວນຮຸ້ນສາມັນທັງໝົດແມ່ນມີ 100.000.000 ຮຸ້ນ ເຊິ່ງມີມູນຄ່າໜ້າໃບຮຸ້ນ ຮຸ້ນລະ 500 ກີບ (2017: 80.000.000 ຮຸ້ນ ເຊິ່ງມີມູນຄ່າໜ້າໃບຮຸ້ນ ຮຸ້ນລະ 500 ກີບ). ຮຸ້ນສາມັນທັງໝົດທີ່ໄດ້ຈົດເຂົ້າເປັນຕົ້ນທຶນໄດ້ຖືກຊຳລະແລ້ວເຕັມຈຳນວນ.

14. ຄ້ຳສະສົມຕາມລະບຽບການ

	2018 ກີບ	2017 ກີບ
ວັນທີ 1 ມັງກອນ	826.098.998	422.112.154
ເພີ່ມຂຶ້ນໃນປີ	61.397.415	403.986.844
ວັນທີ 31 ທັນວາ	**887.496.413**	**826.098.998**

ຄ້ຳສະສົມຕາມລະບຽບການ ແມ່ນສ້າງຂຶ້ນຕາມກົດໝາຍວິສາຫະກິດຂອງ ສປປ ລາວ ເຊິ່ງກຳນົດໃຫ້ບໍລິສັດຕັ້ງຄ້ຳສະສົມຕາມລະ ບຽບການ ຢ່າງຕ່ຳ 10% ຂອງກຳໄລສຸດທິໃນປີ ຈົນຄ້ຳສະສົມຕາມລະບຽບການຄິບ 50% ຂອງມູນຄ່າທຶນຈົດທະບຽນ.

ວັນທີ 31 ທັນວາ 2018. ຜູ້ບໍລິຫານໄດ້ອະນຸມັດແບ່ງປັນກຳໄລສຳລັບປີສິ້ນສຸດ ວັນທີ 31 ທັນວາ 2018 ເປັນຄ້ຳສະສົມຕາມລະບຽບການໃນອັດຕາ 10% ຫຼື ເທົ່າກັບ 61.397.415 ກີບ (ປີ 2017: 403.986.844 ກີບ).

15. ລາຍຮັບຈາກການຂາຍ ແລະ ບໍລິການ

	2018 ກີບ	2017 ກີບ
ລາຍຮັບຈາກການຂາຍ - ການຄ້າ	43.627.517.934	49.722.391.238
ລາຍຮັບຈາກການຂາຍ - ເບ້ຍຕົ້ນປາມ	1.895.760.000	3.516.670.000
ລາຍຮັບຈາກການບໍລິການ - ການປູກຕົ້ນປາມ[i]	-	2.142.000.000
	45.523.277.934	**55.381.061.238**

(i) ລາຍຮັບຈາກການບໍລິການປູກຕົ້ນປາມ ປະກອບມີ ການໃຫ້ຄຳປຶກສາໃນການປູກປາມ ແລະ ການບຸກເບີກພັດທະນາທີ່ດິນໃນພື້ນທີ່ປູກ.

16. ລາຍຈ່າຍຈຳແນກຕາມລັກສະນະເນື້ອໃນ

ລາຍຈ່າຍດັ່ງລຸ່ມນີ້ແມ່ນເປັນລາຍຈ່າຍຫຼັກໆທີ່ເກີດຂຶ້ນພາຍໃນປີ ເຊິ່ງລວມຢູ່ໃນໃບລາຍງານຜົນໄດ້ຮັບ

	ສຳລັບປີສິ້ນສຸດວັນທີ 31 ທັນວາ 2018 ກີບ	ສຳລັບປີສິ້ນສຸດວັນທີ 31 ທັນວາ 2017 ກີບ
ຕົ້ນທຶນໃນການຊື້ສິນຄ້າເພື່ອຂາຍ	36.914.245.484	43.057.195.642
ເງິນເດືອນ/ລາຍຈ່າຍກ່ຽວຂ້ອງກັບເງິນເດືອນ	2.314.609.731	1.824.552.103
ຄ່າຫຼ້ຍຫ້ຽນຊັບສິນບັດຄົງທີ່ມີຕົວຕົນ	1.751.650.811	1.513.949.092

17. ອາກອນກຳໄລ

ອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ບໍລິສັດ ມີພັນທະໃນການຊຳລະອາກອນລາຍໄດ້ ໃນຮູບແບບຂອງ ອາກອນກຳໄລໃນອັດຕາ 24% ຂອງກຳໄລທາງອາກອນ. ນອກຈາກນີ້, ບໍລິສັດຈົດທະບຽນໃນຕະຫລາດຫຼັກຊັບລາວ ເຊິ່ງອີງຕາມລະບຽບຂອງຕະຫຼາດຫຼັກຊັບ ບໍສັດຈະໄດ້ຮັບສ່ວນຫຼຸດຕື່ມອີກ 5% ຈາກອັດຕາອາກອນກຳໄລປະຈຳປີ ເປັນເວລາ 4 ປີນັບຈາກປີທີ່ບໍລິສັດໄດ້ເຂົ້າຕະຫຼາດຫຼັກຊັບ ອີງຕາມກົດໝາຍວ່າດ້ວຍອາກອນຂອງສປປລາວ.

ລະບົບອາກອນໃນ ສປປ ລາວ ແມ່ນຂ້ອນຂ້າງໃໝ່ ແລະ ມີອາກອນທີ່ຫຼາກຫຼາຍ ແລະ ມັກມີການດັດປັບກົດໝາຍເລື້ອຍໆ ຊຶ່ງມັນບໍ່ຈະແຈ້ງ. ຂັດແຍ້ງກັນ ແລະ ມີການຕີຄວາມໝາຍທີ່ແຕກຕ່າງກັນກັບທີ່ມີຢູ່ໃນໜ່ວຍງານໄລ່ລຽງອາກອນ ແລະ ເຂດອຳນາດສານ. ອາກອນອາດມີການທົບທວນ ແລະ ກວດສອບຄືນຈາກເຈົ້າໜ້າທີ່ ຜູ້ເຊິ່ງສາມາດປັບໃໝ ແລະ ລົງໂທດ.

ປັດໃຈເຫຼົ່ານີ້ ອາດສ້າງຄວາມສ່ຽງທາງອາກອນໃນ ສປປ ລາວ ທີ່ມີສາລະສຳຄັນກວ່າປະເທດອື່ນໆ. ຜູ້ບໍລິຫານ ເຊື່ອວ່າ ໄດ້ຈັດກຽມຢ່າງພຽງພໍສຳລັບໜີ້ຕ້ອງສົ່ງອາກອນ ຕາມການຕີຄວາມຂອງ ກົດໝາຍສ່ວຍສາອາກອນ. ເຖິງຢ່າງໃດກໍ່ຕາມ ເຈົ້າໜ້າທີ່ທີ່ກ່ຽວຂ້ອງອາດມີການຕີຄວາມທີ່ແຕກຕ່າງກັນ ແລະ ຜົນກະທົບຂອງຄວາມແຕກຕ່າງດັ່ງກ່າວອາດມີສາລະສຳຄັນ.

ໃນຊ່ວງໄລຍະທ້າຍປີ ສິ້ນສຸດວັນທີ 31 ທັນວາ 2018. ບໍລິສັດ ລາວອາໂກຣເທັກ ມະຫາຊົນ ໄດ້ຮັບຮູ້ອາກອນກຳໄລ ເຂົ້າໃນໃບລາຍງານຜົນໄດ້ຮັບ ຈຳນວນ 192.962.323 ກີບ (ປີ 2017: 1.585.065.316 ກີບ).

18. ກຳໄລຕໍ່ຮຸ້ນ

ກຳໄລພື້ນຖານຕໍ່ຮຸ້ນແມ່ນຖືກຄິດໄລ່ຕາມອັດຕາສ່ວນຂອງກຳໄລຕໍ່ຜູ້ຖືຫຸ້ນໂດຍຄິດໄລ່ແບບອັດຕາທ່ວງນ້ຳໜັກສະເລ່ຍ ຂອງ ຈຳນວນຮຸ້ນສາມັນ

	2018 ກີບ	2017 ກີບ
ກຳໄລສຳລັບຜູ້ຖືຮຸ້ນສາມັນ (ກີບ)	613.974.154	4.039.868.435
ອັດຕາທ່ວງນ້ຳໜັກສະເລ່ຍຂອງຈຳນວນຮຸ້ນສາມັນ ຄົງເຫຼືອ (ຮຸ້ນ)	87.500.000	51.500.000
ກຳໄລພື້ນຖານຕໍ່ຮຸ້ນ (ກີບຕໍ່ຮຸ້ນ)	7	78

19. ພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ຜ່ານ ໜຶ່ງ ຫຼື ຫຼາຍກຸ່ມ ຄວບຄຸມ ຫຼື ຖືກຄວບຄຸມໂດຍ ບໍລິສັດ ຫຼື ພາຍໃຕ້ການຄວບຄຸມທົ່ວໄປຂອງບໍລິສັດ ລວມທັງບໍລິສັດ ທີ່ເຮັດໜ້າທີ່ຖືຮຸ້ນ ບໍລິສັດ ຍ່ອຍ ແລະ ບໍລິສັດ ທີ່ກ່ຽວຂ້ອງກັບບໍລິສັດຍ່ອຍຖືເປັນບໍລິສັດໃນກຸ່ມດຽວກັນ ບຸກຄົນທີ່ເປັນເຈົ້າຂອງທາງກົງ ຫຼື ທາງອ້ອມ ທີ່ມີສ່ວນໄດ້ເສຍໃນບໍລິສັດ ແລະ ມີອິດທິພົນຫຼາຍຕໍ່ກັບບໍລິສັດ. ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງ ບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດໃນກຸ່ມ ກັບບຸກຄົນທີ່ກ່ຽວຂ້ອງ ເຫຼົ່ານີ້ ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ. ບໍ່ໄດ້ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

19. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ລາຍການທີ່ສຳຄັນລຸ່ມນີ້ແມ່ນມີການພົວພັນກັບພາກສ່ວນທີ່ກ່ຽວຂ້ອງ:

19.1 ການຊື້ສິນຄ້າ

	ສຳລັບປີສິ້ນສຸດວັນທີ 31 ທັນວາ 2018 ກີບ	ສຳລັບປີສິ້ນສຸດວັນທີ 31 ທັນວາ 2017 ກີບ
ຊື້ສິນຄ້າ ແລະ ລາຍການອື່ນໆກັບພາກສ່ວນທີ່ກ່ຽວຂ້ອງຈາກ:		
OPG Tech	6.451.783.112	11.482.312.290

ລາຍການເຄື່ອນໄຫວຂ້າງເທິງສ່ວນໃຫຍ່ແມ່ນກ່ຽວກັບສິນຄ້າສຳເລັດຮູບ (ຜະລິດຕະພັນນ້ຳມັນປາມສຳລັບປຸງແຕ່ງອາຫານ) ນຳເຂົ້າຈາກ OPG Tech ປະເທດໄທ ເພື່ອຂາຍໃນ ສປປ ລາວ ໂດຍ ບໍລິສັດ.

19.2 ຍອດເຫຼືອຈາກການຊື້ ແລະ ການຂາຍສິນຄ້າ ແລະ ລາຍການອື່ນໆ

	31 ທັນວາ 2018 ກີບ	31 ທັນວາ 2017 ກີບ
ໜີ້ຕ້ອງສົ່ງໃຫ້:		
ພາກສ່ວນທີ່ກ່ຽວຂ້ອງ – OPG Tech	8.690.429.452	9.357.412.392
ໜີ້ຕ້ອງຮັບຈາກ:		
ທ່ານ ອຸດົມ ແກ້ວທະວົງ	463.594.000	-

ໃນວັນທີ 31 ທັນວາ 2018 ໜີ້ຕ້ອງສົ່ງກັບພາກສ່ວນທີ່ກ່ຽວຂ້ອງ (OPG Tech) ສ່ວນໃຫຍ່ແມ່ນ ຍອດຄ້າງຊຳລະຈາກການຊື້ສິນຄ້າສຳເລັດຮູບ (ຜະລິດຕະພັນນ້ຳມັນປາມສຳລັບປຸແຕ່ງອາຫານ) ນຳເຂົ້າຈາກ ປະເທດໄທ ເພື່ອຂາຍໃນ ສປປ ລາວ ໂດຍ ບໍລິສັດໃນປີທີ່ຜ່ານມາ

ໃນວັນທີ 31 ທັນ 2018 ໜີ້ຕ້ອງຮັບຈາກທ່ານ ອຸດົມ ແກ້ວທະວົງ ແມ່ນເປັນໜີ້ທີ່ກ່ຽວກັບລາຍຈ່າຍຈັດຊື້ທີ່ດິນໃຫ້ກັບບໍລິສັດ.

20. ພາລະຜູກພັນ

ໃນວັນທີ 31 ທັນວາ 2018. ບໍລິສັດ ມີພາລະຜູກພັນສັນຍາເຊົ່າເພື່ອດຳເນີນງານທີ່ສຳຄັນ ສຳລັບການສຳປະທານທີ່ດິນ ຢູ່ແຂວງ ວຽງຈັນ ແລະ ແຂວງ ສາລະວັນ ເປັນເວລາ 30 ປີ ແລະ ສັນຍາເຊົ່າເຮືອນ ສຳລັບ 10 ປີ.

	31 ທັນວາ 2018
	ກີບ
ບໍ່ເກີນ 1 ປີ	39.099.003
ເກີນ 1 ປີ ແລະ ບໍ່ເກີນ 5 ປີ	179.077.094
ເກີນ 5 ປີ	624.276.906
	842.453.003

21 ຂໍ້ມູນເພີ່ເຕີມ

ບໍລິສັດໄດ້ນຳສະເໜີໃບລາຍງານຜົນໄດ້ຮັບທີ່ບໍ່ໄດ້ກວດສອບສຳລັບໄລຍະເວລາສາມເດືອນສິ້ນສຸດວັນທີ 31 ທັນວາ 2018 ພາຍໃຕ້ບົດອະທິບາຍຊ້ອນທ້າຍນີ້. ນີ້ແມ່ນສອດຄ່ອງກັບກົດລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກ ໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບແຫ່ງ ສປປ ລາວ (ບົດອະທິບາຍທີ 2.1).

ໃບລາຍງານຜົນໄດ້ຮັບ
ສຳລັບໄລຍະເວລາສາມເດືອນເລີ່ມແຕ່ວັນທີ 1 ຕຸລາ ເຖິງ 31 ທັນວາ 2018

	(ບໍ່ໄດ້ກວດສອບ) ສຳລັບໄລຍະເວລາສາມ ເດືອນເລີ່ມແຕ່ວັນທີ 1 ຕຸລາ ເຖິງ 31 ທັນວາ 2018
	ກີບ
ລາຍຮັບຈາກການຂາຍ ແລະ ການບໍລິການ	15.251.785.771
ຕົ້ນທຶນໃນການຂາຍ ແລະ ການບໍລິການ	(13.230.704.860)
ກຳໄລ ຂັ້ນຕົ້ນ	**2.021.080.911**
ລາຍຈ່າຍການຂາຍ ແລະ ບໍລິຫານ	(1.299.215.286)
ລາຍຮັບອື່ນໆ	21.037.948
ຂາດທຶນຈາກອັດຕາແລກປ່ຽນ	(299.427.047)
ກຳໄລຈາກການດຳເນີນງານກ່ອນອາກອນກຳໄລ	**443.476.526**
ອາກອນກຳໄລ	(39.600.034)
ກຳໄລສຸດທິສຳລັບປີ	**403.876.492**